ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
********✧********

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ
ຫ້ອງການ

ເລກທີ 259/ຫກ
ນະຄອນຫລວງວຽງຈັນ, ວັນທີ: 23 SEP 2019

# ບົດບັນທຶກ ກອງປະຊຸມກຸ່ມວິຊາການ
# ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 03, 2019.

ກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 03, 2019 ໄດ້ໄຂຂຶ້ນ ໃນວັນທີ 06 ເດືອນ ກັນຍາ ປີ 2019, ເວລາ 08:30 ຢູ່ທີ່ຫ້ອງປະຊຸມຂອງຫ້ອງການ ຄຊກລ ໂດຍການເປັນປະທານຂອງ ທ່ານ ບຸນເພັງ ສີສະຫວັດ ຮອງຫົວໜ້າຫ້ອງການຝ່າຍປະຕິບັດງານ, ຄູ່ຮ່ວມງານຕ່າງໆ ລວມທັງ ພະນັກງານ ແລະ ວິຊາການຫ້ອງການ ຄຊກລ ເຂົ້າຮ່ວມຈຳນວນ: 13 ທ່ານ, ຍິງ: 06 ທ່ານ.

ໃນການກ່າວໄຂກອງປະຊຸມ, ທ່ານປະທານກອງປະຊຸມໄດ້ເນັ້ນໜັກເຖິງຈຸດປະສົງຂອງກອງປະຊຸມກຸ່ມວິຊາການ ແມ່ນກອງປະຊຸມ ເພື່ອແລກປ່ຽນສົນທະນາ, ປຶກສາຫາລືກ່ຽວກັບ ແນວທາງໃນການໂຄສະນາຜົນຮ້າຍຂອງ ລບຕ ໃຫ້ປະຊາຊົນເຂົ້າໃຈ ແລະ ສາມາດຫຼີກລ່ຽງ ການເກີດອຸປະຕິເຫດຈາກ ລບຕ, ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຫ້ອງການ ຄຊກລ ໄດ້ທົບທວນບົດບັນທຶກກອງປະຊຸມຄັ້ງທີ່ຜ່ານມາໂດຍຫຍໍ້ພ້ອມກັບລາຍງານການເຄື່ອນໄຫວວຽກປະຈຳໄຕມາດ 03 ປີ 2019 ແລະ ແຜນຄາດຄະເນ ໃນໄຕມາດ 04 ປີ 2019 ເຊິ່ງໃນນີ້ແມ່ນຈະຊຸມໃສ່: ກອງປະຊຸມກຸ່ມວິຊາການ, ປະສານສົມທົບກັບ ກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ ຈັດລາຍການວິທະຍຸ ຢູ່ 5 ແຂວງ, ຈັດກອງປະຊຸມທົບທວນອຸປະກອນໂຄສະນາຜົນຮ້າຍຂອງ ລບຕ, ຈັດກອງປະຊຸມປະຈຳປີ ແລະ ທົບທວນປະຈຳປີກ່ຽວກັບການຈັດລາຍການວິທະຍຸໂຄສະນາຜົນຮ້າຍຂອງ ລບຕ ທາງລາຍການວິທະຍຸຢູ່ 5 ແຂວງ.

ຈາກນັ້ນຕາງໜ້າຈາກບັນດາອົງການປະຕິບັດງານ ແລະ ຄູ່ຮ່ວມງານຕ່າງໆ ກໍ່ໄດ້ຜັດປ່ຽນກັນລາຍງານຜົນສຳເລັດໃນການປະຕິບັດວຽກງານຂອງຕົນໃນໄລຍະທີ່ຜ່ານມາ ແລະ ແຜນການເຄື່ອນໄຫວໃນໄຕມາດ 04, ປີ 2019 ໃນນີ້ໄດ້ມີ ທ່ານຜູ້ຕາງໜ້າ ກົມສື່ມວນຊົນ ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ, ທ່ານຜູ້ຕາງໜ້າ ກົມສົນລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ, ທ່ານຜູ້ຕາງໜ້າ ກົມພາລະສຶກສາ ກະຊວງສຶກສາທິການ ແລະ ກິລາ, ທ່ານຜູ້ຕາງໜ້າ ກົມຂະບວນການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ທ່ານຜູ້ຕາງໜ້າອົງການນ້ຳໃຈນັກກິລາ ປະຈຳ ສປປ ລາວ, ທ່ານຜູ້ຕາງໜ້າໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ), ທ່ານຜູ້ຕາງໜ້າ ອົງການເວີດສ໌ເອຢູເຄຊັນ (WEL), ທ່ານຜູ້ຕາງໜ້າ ອົງການແມັກ (MAG), ທ່ານຜູ້ຕາງໜ້າ ໄດ້ລາຍງານຜົນສຳເລັດຂອງການເຄື່ອນໄຫວວຽກງານໃນໄຕມາດ 03, 2019 ແລະ ແຜນວຽກປະຈຳໄຕມາດ 04, 2019. ສ່ວນລາຍລະອຽດຂອງການເຄື່ອນໄຫວຂອງແຕ່ລະພາກສ່ວນພ້ອມດ້ວຍແຜນແມ່ນສາມາດເບິ່ງ ໄດ້ໃນເອກະສານຊ້ອນທ້າຍ.

• ໃນນີ້ຍັງໄດ້ລາຍງານກ່ຽວກັບນະໂຍບາຍຕໍ່ຜູ້ຖືກເຄາະຮ້າຍຈາກອຸປະຕິເຫດລະເບີດບໍ່ທັນແຕກທີ່ຕົກຄ້າງ ມີກອງທຶນຊ່ວຍເຫລືອດ້ານການແພດ ເວລາເກີດອຸປະຕິເຫດ ອັດຕາກິນສຳລັບຄົນເຈັບເວລານອນປິ່ນປົວຢູ່ໂຮງໝໍ 80.000 ກີບຕໍ່ວັນ/ຄົນ ແລະ 80.000 ກີບ/ວັນສຳລັບຜູ້ມາເຝົ້າອີກ 1 ຄົນ.
-ໃຫ້ຄຳປຶກສາດ້ານສຸກຂະພາບຈິດ ເວລາ ເກີດອຸປະຕິເຫດ, ຟື້ນຟູດ້ານໜ້າທີ່ການ (ເຄື່ອງອີງຄະທຽມ).

**ໃນກອງປະຊຸມ ຍັງໄດ້ສົນທະນາ ແລະ ປຶກສາຫາລືກັນໃນຫຼາຍຫົວຂໍ້ທີ່ໜ້າສົນໃຈ:**

1. ກົມສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ພົບຄວາມຫຍຸ້ງຍາກໃນການເຮັດວຽກຂອງວິທະຍຸ ເລື່ອງໄພທຳມະຊາດ ເພາະການໂຄສະນາແມ່ນຢູ່ 4 ແຂວງພາກໃຕ້ (ສະຖານນີຖືກນ້ຳຖ້ວມ).
- ເຫັນດີທີ່ຈະມີການຝຶກອົບຮົມນຳໃຊ້ (ໂປສະເຕີ້) ທາງກົມຢາກເຂົ້າຮ່ວມນຳ
2. ກົມສົນລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ ຈະຈັດກິດຈະກຳ 150 ແຫ່ງ ໂຄງການຂອງພວກເຮົາແມ່ນຢູ່ຫ່າງໄກສອກຫລີກ ຍັງບໍ່ທັນດຳເນີນກຳຈະກຳລໍຖ້າອະນຸມັດ MOU.
- ກິດຈະກຳຮ່ວມກັບໂຄງການນ້ຳໃຈນັກກິລາກໍ່ເລື່ອນ 2 ຄັ້ງແລ້ວ ຍັງບໍ່ທັນໄດ້ປະຕິບັດກິດຈະກຳ ຍ້ອນໄພທຳມະຊາດນ້ຳຖ້ວມ ຫລັງຈາກແລ້ວນ້ຳຖ້ວມແລ້ວຈະຊອກຫາເວລາທີ່ເໝາະສົມ.
3. ກົມສາມັນສຶກສາ ກະຊວງສຶກສາທິການ ແລະ ກິລາ ສິ່ງທ້າທາຍພາກລັດແມ່ນມີການຊັບຊ້ອນຍົກຍ້າຍ ພະນັກງານ, ກົມເຮົາຈັດຕັ້ງປະຕິບັດຫລັກສູດການຮຽນ - ການສອນ ໄດ້ 10 ແຂວງ ຍັງຂາດແຂວງໄຊສົມບູນ ແລະ ແຂວງວຽງຈັນ.
4. ໂຄງການເກັບກູ້ລະເບີດແຫ່ງຊາດລາວ (UXO) ກິດຈະກຳ ຕິດຕາມການເຄື່ອນໄຫວ ການຮ່ວມລະຫວ່າງ ຄກລ ແລະ ອົງການນ້ຳໃຈນັກກິລາ ກ່ຽວກັບການໃຫ້ຄວາມຮູ້ເລື່ອງ ລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ໂດຍຜ່ານກິລາບານເຕະ ຢູ່ແຂວງສາລະວັນ.
- ສຳເລັດ ໃນການອະນຸມັດຈັດຕັ້ງປະຕິບັດກິດຈະກຳ, ກອງປະຊຸມສະເໜີໂຄງການ/ ຝຶກອົບຮົມຄູຝຶກ ກິລາບານເຕະ ແລະ ລບຕ.
- ກະກຽມຜະລິດ ແຜ່ນຜ້າໂປສະເຕີ ແລະ ຕຸກກະຕາ ໃຫ້ແຂວງ, ສືບຕໍ່ລົງເຄື່ອນໄຫວ ວຽກງານໂຄສະນາສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກອັນຕະລາຍ ຈາກ ລບຕ ສຸກເສີນ ຢູ່ 3 ຈຸດເຕົ້າໂຮມຊຸມຊົນ ທີ່ຖືກຜົນກະທົບໄພພິບັດນ້ຳຖ້ວມ ຂອງເມືອງສະໜາມໄຊ ແຂວງອັດຕະປື ທີ່ຍັງບໍ່ໄດ້ປະຕິບັດ.
5. ໂຄງການນ້ຳໃຈນັກກິລາ (SOS) ສືບຕໍ່ປະຕິບັດກິດຈະກຳຮຽນຮູ້ເລື່ອງ ລບຕ ໂດຍຜ່ານກິລາບານເຕະ ຢູ່ເມືອງສາລະວັນ, ເລົ່າງາມ, ເມືອງຄົງເຊໂດນ, ເມືອງວາປີ ລວມທັງໝົດ 21 ໂຮງຮຽນ, ຈັດກອງປະຊຸມສະເໜີກິດຈະກຳ ແລະ ຝຶກອົບຮົມຄູຝຶກ ຄກລ ແລກປ່ຽນບົດຮຽນນຳຄູຝຶກ ອົງການນ້ຳໃຈນັກກິລາແຂວງຊຽງຂວາງ ກ່ຽວກັບການປະຕິບັດກິດຈະກຳ
- ສິ່ງທ້າທາຍ ນັກຮຽນມີຈຳນວນຫລາຍ ຄູຝຶກເຮົາມີໜ້ອຍນັກຮຽນ ບໍ່ສາມາດເຂົ້າຮ່ວມໄດ້ໝົດທຸກຄົນ ບາງຄັ້ງໄດ້ຈັດເປັນສອງຕອນ ຄືພາກເຊົ້າ ແລະ ພາກບ່າຍ.
- ມີບາງຄັ້ງບໍ່ໄດ້ປະຕິບັດກິດຈະກຳຕາມແຜນເນື່ອງຈາກເປັນລະດູຝົນ ບາງໂຮງຮຽນເສັ້ນທາງເຂົ້າເຖິງຍາກ.
6. ອົງການເວີດສ໌ເອຢູເຄຊັນ (WEL) ສິ່ງທ້າທາຍໃນການປະຕິບັດໂຄງການ ຂຶ້ນແຜນຄົບໝົດແຕ່ຜູ້ໃຫ້ທຶນຕັດອອກໃຫ້ຂໍຄຳເຫັນຂັ້ນເມືອງ, ຂັ້ນແຂວງແຕ່ເຮົາບໍ່ມີງົບປະມານ.
9. ອົງການ MAG ລົງປະຕິບັດກິດຈະກຳຂອງ RE ລົງແຂວງຄຳມ່ວນມີ 30 ໝູ່ບ້ານ ສຳລັບໂຄງການໃໝ່ແມ່ນເລີ່ມແຕ່ເດືອນ ມີນາ ແລະ ການສຳຫລວດເປັນທາງການ, ເວລາລົງບ້ານຈະເອົາສະຕິກເກີ້ລົງຕິດ ແລະ ມີເບີ້ສຸກເສີນ.
- ຢາກໃຫ້ທີມງານ MRE ໄປຢ້ຽມຢາມທາງທີມງານອົງການ MAG ເຮົາແດ່ ຢາກໃຫ້ໄປເຫັນກິດຈະກຳຂອງພວກເຮົາວ່າໃຊ້ແນວນີ້ຖືກຕ້ອງບໍ່.
- ມີແຜນຈະພັດທະນາຫລັກສູດຈະຂໍແລກປ່ຽນນຳອົງການເວີລເອດູເຄຊັນ.

**ໃນນີ້ຕອນທ້າຍຂອງກອງປະຊຸມ ທ່ານປະທານກອງປະຊຸມໄດ້ຊີ້ນຳວ່າ:**

1. ສະເໜີຂະຫຍາຍການໂຄສະນາໃຫ້ກວ້າງຂວາງຂຶ້ນກວ່າເກົ່າ ພາກສ່ວນຂອງໂຄງການແລກປ່ຽນແຊກັນ, ເຊັ່ນ: ວິທະຍຸແຂວງ, ອາສາສະໝັກບ້ານ.
2. ພວກເຮົາມີແຜນຈະຝຶກອົບຮົມໃຫ້ 4 ແຂວງພາກໃຕ້ ໃນການນຳໃຊ້ລະບົບ IMMSA.
3. ຖ້າມີອຸປະກອນຕ່າງໆກໍ່ແລກປ່ຽນກັນ ແຈ້ງການຕ່າງໆ ດ້ານເນື້ອໃນ (ໄດ້ມີການຖິ້ມລະເບີດໃສ່ແຜ່ນດິນລາວ ປະມານ 3 ລ້ານໂຕນ) ແມ່ນຮັບຮູ້ທົ່ວໂລກ ແລະ ອີງຕາມຄຳສັ່ງ ຂອງທ່ານນາຍົກລັດຖະມົນຕີ ສະລັບເລກທີ 39/ນຍ, ລົງວັນທີ 28 ກັນຍາ 2016.
4. ສຳລັບກົມສາມັນສຶກສາ ກະຊວງສຶກສາທິການ ແລະ ກິລາ ທີ່ຍັງ 2 ແຂວງທີ່ຍັງບໍ່ໄດ້ເຂົ້າຫລັກສູດ ແມ່ນໃຫ້ທ່ານປະສານຫາກະຊວງການຕ່າງປະເທດເບິ່ງ ເພື່ອຂະຫຍາຍຫລັກສູດການສຶກສາ.
5. ຈະປະສານນຳອົງການສະຫະປະຊາຊາດຄືນ ເລື່ອງນາຍແປພາສາ ເພາະເຮົາກໍ່ຢາກໃຫ້ຊ່ຽວຊານເຂົ້າຮ່ວມນຳ, ເຮັດແນວໃດ ເພື່ອໃຫ້ມີນາຍແປພາສາ ໃນກອງປະຊຸມກໍ່ຈະເປັນການດີ.

**<u>ໝາຍເຫດ</u>:** ສຳລັບລາຍລະອຽດຂອງການເຄື່ອນໄຫວໄຕມາດ 03, 2019 ແລະ ແຜນການເຄື່ອນໄຫວໄຕມາດ 04, 2019 ຂອງບັນດາອົງການປະຕິບັດງານ, ທ່ານສາມາດເບິ່ງໄດ້ໃນເອກະສານຂັດຕິດ.

**ປະທານກອງປະຊຸມ**

ບຸນເພັງ ສີສະຫວັດ

Mr.Bounpheng SISAWATH

**ບັນທຶກກອງປະຊຸມໂດຍ:**